## ສິດທິຂອງທ່ານ ແລະ ຄວາມຄຸ້ມຄອງຈາກໃບບິນທາງການແພດທີ່ບໍ່ຄາດຄິດ

ເມື່ອທ່ານໄດ້ຮັບການເບິ່ງແຍງສຸກເສີນ ຫຼື ໄດ້ຮັບການປິ່ນປົວໂດຍຜູ້ໃຫ້ບໍລິການນອກເຄືອຂ່າຍຢູ່ທີ່ໂຮງໝໍໃນເຄືອຂ່າຍ ຫຼື ສູນຜ່າຕັດຄົນເຈັບນອກ, ທ່ານຈະໄດ້ຮັບຄວາມຄຸ້ມຄອງຈາກການຮຽກເກັບເງິນທີ່ຍັງຄ້າງຢູ່. ໃນກໍລະນີເຫຼົ່ານີ້, ທ່ານບໍ່ຄວນຖືກຮຽກເກັບເງິນຫຼາຍກວ່າຄ່າໃຊ້ຈ່າຍຮ່ວມ, ຄ່າປະກັນໄພຮ່ວມ ແລະ/ຫຼື ຄ່າໃຊ້ຈ່າຍສ່ວນທຳອິດຂອງແຜນປະກັນຂອງທ່ານ. ເບິ່ງຄຳຖາມທີ່ມັກຖາມເລື້ອຍໆເພີ່ມເຕີມໃນໜ້ານີ້.

## "ການຮຽກເກັບເງິນທີ່ຍັງຄ້າງຢູ່" (ບາງຄັ້ງເອີ້ນວ່າ "ການຮຽກເກັບເງິນທີ່ບໍ່ຄາດຄິດ") ແມ່ນຫຍັງ?

ເມື່ອທ່ານໄປພົບທ່ານໝໍ ຫຼື ຜູ້ໃຫ້ບໍລິການເບິ່ງແຍງສຸຂະພາບອື່ນໆ ທ່ານອາດຈະເປັນໜີ້ຄ່າໃຊ້ຈ່າຍທີ່ຕ້ອງຈ່າຍເອງ ເຊັ່ນ: ຄ່າໃຊຈ່າຍຮ່ວມ, ຄ່າປະກັນໄພຮ່ວມ ແລະ/ຫຼື ຄ່າໃຊ້ຈ່າຍສ່ວນທຳອິດ. ທ່ານອາດຈະມີຄ່າໃຊ້ຈ່າຍເພີ່ມເຕີມ ຫຼື ຈຳເປັນຕ້ອງຈ່າຍຄ່າໃບບິນທັງໝົດ ຖ້າທ່ານໄປພົບຜູ້ໃຫ້ບໍລິການ ຫຼື ໄປທີ່ສະຖານບໍລິການເບິ່ງແຍງສຸຂະພາບທີ່ບໍ່ໄດ້ຢູ່ໃນເຄືອຂ່າຍຂອງແຜນປະກັນສຸຂະພາບຂອງທ່ານ.

"ນອກເຄືອຂ່າຍ" ໝາຍເຖິງຜູ້ໃຫ້ບໍລິການ ແລະ ສະຖານບໍລິການທີ່ບໍ່ໄດ້ເຊັນສັນຍາກັບແຜນປະກັນສຸຂະພາບຂອງທ່ານເພື່ອໃຫ້ການບໍລິການ. ຜູ້ໃຫ້ບໍລິການນອກເຄືອຂ່າຍອາດຈະໄດ້ຮັບອະນຸຍາດໃຫ້ຮຽກເກັບເງິນຈາກທ່ານສຳລັບສ່ວນຕ່າງລະຫວ່າງຈຳນວນທີ່ແຜນປະກັນຂອງທ່ານຈ່າຍໃຫ້ ແລະ ຈຳນວນເຕັມທີ່ຮຽກເກັບສຳລັບການບໍລິການ. ສິ່ງນີ້ເອີ້ນວ່າ "ການຮຽກເກັບເງິນທີ່ຍັງຄ້າງຢູ່." ຈຳນວນເງິນນີ້ມີແນວໂນ້ມວ່າຈະຫຼາຍກວ່າຄ່າໃຊ້ຈ່າຍໃນເຄືອຂ່າຍສຳລັບການບໍລິການດຽວກັນ ແລະ ອາດຈະບໍ່ນັບລວມເຂົ້າໃນວົງເງິນສູງສຸດຂອງຄ່າໃຊ້ຈ່າຍສ່ວນທຳອິດ ຫຼື ຈຳນວນຕ້ອງຈ່າຍເອງປະຈຳປີຂອງແຜນປະກັນຂອງທ່ານ.

"ການຮຽກເກັບເງິນທີ່ບໍ່ຄາດຄິດ" ແມ່ນໃບບິນທີ່ຍັງຄ້າງຢູ່ທີ່ບໍ່ຄາດວ່າຈະມີ. ສິ່ງນີ້ສາມາດເກີດຂຶ້ນໄດ້ ເມື່ອທ່ານບໍ່ສາມາດຄວບຄຸມວ່າບຸກຄົນໃດແດ່ທີ່ມີສ່ວນຮ່ວມໃນການເບິ່ງແຍງຂອງທ່ານ ເຊັ່ນ: ເມື່ອທ່ານມີເຫດສຸກເສີນ ຫຼື ເມື່ອທ່ານນັດໝາຍເພື່ອເຂົ້າໄປພົບທ່ານໝໍທີ່ສະຖານບໍລິການໃນເຄືອຂ່າຍ ແຕ່ໄດ້ຮັບການປິ່ນປົວໂດຍບໍ່ຄາດຄິດຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ. ໃບບິນທາງການແພດບາງໃບທີ່ບໍ່ຄາດຄິດອາດຮຽກເກັບເປັນຈຳນວນຫຼາຍພັນໂດລາ ໂດຍຂຶ້ນຢູ່ກັບຂັ້ນຕອນການປິ່ນປົວ.

## ທ່ານໄດ້ຮັບຄວາມຄຸ້ມຄອງຈາກການຮຽກເກັບເງິນທີ່ຍັງຄ້າງຢູ່ສຳລັບ:

### ການບໍລິການສຸກເສີນ

ຖ້າທ່ານມີພາວະທາງການແພດສຸກເສີນ ແລະ ໄດ້ຮັບການບໍລິການສຸກເສີນຈາກຜູ້ໃຫ້ບໍລິການ ຫຼື ສະຖານບໍລິການນອກເຄືອຂ່າຍ, ຈຳນວນຫຼາຍສຸດທີ່ເຂົາເຈົ້າສາມາດຮຽກເກັບຈາກທ່ານແມ່ນຈຳນວນຄ່າໃຊ້ຈ່າຍໃນການປັນສ່ວນຕົ້ນທຶນໃນເຄືອຂ່າຍຂອງທ່ານ (ເຊັ່ນ: ຄ່າໃຊ້ຈ່າຍຮ່ວມ ແລະ ຄ່າປະກັນໄພຮ່ວມ). ທ່ານ**ຈະບໍ່**ຖືກຮຽກເກັບເງິນທີ່ຍັງຄ້າງຢູ່ສຳລັບການບໍລິການສຸກເສີນເຫຼົ່ານີ້. ສິ່ງນີ້ລວມເຖິງການບໍລິການທີ່ທ່ານອາດຈະໄດ້ຮັບຫຼັງຈາກອາການຂອງທ່ານຢູ່ໃນພາວະຄົງທີ່ແລ້ວ, ເວັ້ນເສຍຈາກວ່າທ່ານໄດ້ໃຫ້ຄຳຍິນຍອມເປັນລາຍລັກອັກສອນ ແລະ ສະຫຼະສິດຂອງທ່ານໃນການ

ໄດ້ຮັບຄວາມຄຸ້ມຄອງທີ່ບໍ່ໃຫ້ຖືກຮຽກເກັບເງິນທີ່ຄ້າງຢູ່ສຳລັບການບໍລິການເຫຼົ່ານີ້ຫຼັງຈາກອາການຄົງທີ່.

ກົດໝາຍຂອງລັດເທັກຊັສຄຸ້ມຄອງຄົນເຈັບທີ່ມີປະກັນສຸຂະພາບທີ່ລັດກຳນົດ (ປະມານ 16 ເປີເຊັນຂອງຊາວເທັກຊັສ) ຈາກໃບບິນທາງການແພດທີ່ບໍ່ຄາດຄິດໃນກໍລະນີສຸກເສີນ ຫຼື ເມື່ອເຂົາເຈົ້າບໍ່ມີທ່ານໝໍໃຫ້ເລືອກ. ກົດໝາຍສັ່ງຫ້າມບໍ່ໃຫ້ທ່ານໝໍ ແລະ ຜູ້ໃຫ້ບໍລິການສົ່ງໃບບິນທາງການແພດທີ່ບໍ່ຄາດຄິດແກ່ຄົນເຈັບໃນກໍລະນີເຫຼົ່ານັ້ນ.

**ການບໍລິການບາງຢ່າງຢູ່ໂຮງໝໍ ຫຼື ສູນຜ່າຕັດຄົນເຈັບນອກໃນເຄືອຂ່າຍ**
ເມື່ອທ່ານໄດ້ຮັບການບໍລິການຈາກໂຮງໝໍ ຫຼື ສູນຜ່າຕັດຄົນເຈັບນອກໃນເຄືອຂ່າຍ, ຜູ້ໃຫ້ບໍລິການບາງລາຍຢູ່ທີ່ນັ້ນອາດຈະຢູ່ນອກເຄືອຂ່າຍ. ໃນກໍລະນີເຫຼົ່ານີ້ ຈຳນວນຫຼາຍສຸດທີ່ຜູ້ໃຫ້ບໍລິການເຫຼົ່ານັ້ນສາມາດຮຽກເກັບເງິນຈາກທ່ານໄດ້ແມ່ນຈຳນວນຄ່າໃຊ້ຈ່າຍໃນການປັນສ່ວນຕົ້ນທຶນໃນເຄືອຂ່າຍຂອງທ່ານ. ສິ່ງນີ້ນຳໃຊ້ກັບການແພດສຸກເສີນ, ການວາງຢາມຶນ, ພະຍາດວິທະຍາ, ລັງສີວິທະຍາ, ຫ້ອງທົດລອງ, ກຸມານເວດສາດ, ຜູ້ຊ່ວຍໝໍຜ່າຕັດ, ແພດໃນໂຮງໝໍ ຫຼື ແພດເບິ່ງແຍງຄົນເຈັບວິກິດ. ຜູ້ໃຫ້ບໍລິການເຫຼົ່ານີ້**ບໍ່ສາມາດ**ຮຽກເກັບເງິນທີ່ຍັງຄ້າງຢູ່ຈາກທ່ານ ແລະ **ບໍ່**ອາດຂໍໃຫ້ທ່ານສະຫຼະສິດຂອງທ່ານໃນການໄດ້ຮັບຄວາມຄຸ້ມຄອງທີ່**ບໍ່**ໃຫ້ຖືກຮຽກເກັບເງິນທີ່ຍັງຄ້າງຢູ່ໄດ້.

ຖ້າທ່ານໄດ້ຮັບການບໍລິການປະເພດອື່ນໆຢູ່ສະຖານບໍລິການໃນເຄືອຂ່າຍເຫຼົ່ານີ້, ຜູ້ໃຫ້ບໍລິການນອກເຄືອຂ່າຍ**ບໍ່ສາມາດ**ຮຽກເກັບເງິນທີ່ຍັງຄ້າງຢູ່ຈາກທ່ານໄດ້, ເວັ້ນເສຍຈາກວ່າທ່ານໃຫ້ຄຳຍິນຍອມເປັນລາຍລັກອັກສອນ ແລະ ສະຫຼະສິດຂອງທ່ານໃນການໄດ້ຮັບຄວາມຄຸ້ມຄອງ.

ນອກຈາກນັ້ນ ກົດໝາຍຂອງລັດເທັກຊັສຍັງຫ້າມບໍ່ໃຫ້ມີການຮຽກເກັບເງິນທີ່ຍັງຄ້າງຢູ່ສຳລັບການເບິ່ງແຍງສຸຂະພາບ, ການບໍລິການທາງການແພດ ຫຼື ເວດຊະພັນໃດໜຶ່ງທີ່ສະໜອງໃຫ້ຢູ່ສະຖານບໍລິການໃນເຄືອຂ່າຍໂດຍທ່ານໝໍນອກເຄືອຂ່າຍ ຫຼື ຜູ້ໃຫ້ບໍລິການອື່ນໆ ແລະ ສຳລັບການບໍລິການໂດຍຜູ້ໃຫ້ບໍລິການພາບວິນິໄສ ແລະ ຜູ້ໃຫ້ບໍລິການຫ້ອງທົດລອງທີ່ສະໜອງໃຫ້ກ່ຽວກັບການບໍລິການເບິ່ງແຍງສຸຂະພາບທີ່ດຳເນີນການໂດຍເຄືອຂ່າຍທ່ານໝໍ ຫຼື ຜູ້ໃຫ້ບໍລິການ.

***ທ່ານບໍ່ຈຳເປັນຕ້ອງສະຫຼະສິດໃນການໄດ້ຮັບຄວາມຄຸ້ມຄອງຂອງທ່ານຈາກການຮຽກເກັບເງິນທີ່ຍັງຄ້າງຢູ່. ນອກຈາກນັ້ນ ທ່ານຍັງບໍ່ຈຳເປັນຕ້ອງຮັບການເບິ່ງແຍງນອກເຄືອຂ່າຍ. ທ່ານສາມາດເລືອກຜູ້ໃຫ້ບໍລິການ ຫຼື ສະຖານບໍລິການຢູ່ໃນເຄືອຂ່າຍຂອງແຜນປະກັນຂອງທ່ານໄດ້.***

**ໃນຂະນະທີ່ບໍ່ອະນຸຍາດໃຫ້ມີການຮຽກເກັບເງິນທີ່ຍັງຄ້າງຢູ່, ທ່ານຍັງໄດ້ຮັບຄວາມຄຸ້ມຄອງຕໍ່ໄປນີ້ເຊັ່ນກັນ:**

- ທ່ານມີໜ້າທີ່ຮັບຜິດຊອບສະເພາະການຈ່າຍສ່ວນແບ່ງຄ່າໃຊ້ຈ່າຍຂອງທ່ານເທົ່ານັ້ນ (ເຊັ່ນ: ຄ່າໃຊ້ຈ່າຍຮ່ວມ, ຄ່າປະກັນໄພຮ່ວມ ແລະ ຄ່າໃຊ້ຈ່າຍສ່ວນທຳອິດທີ່ທ່ານຈຳເປັນຕ້ອງຈ່າຍ ຖ້າຜູ້ໃຫ້ບໍລິການ ຫຼື ສະຖານບໍລິການຢູ່ໃນເຄືອຂ່າຍ). ແຜນປະກັນຂອງທ່ານຈະຈ່າຍຄ່າໃຊ້ຈ່າຍເພີ່ມເຕີມໃດໜຶ່ງແກ່ຜູ້ໃຫ້ບໍລິການ ແລະ ສະຖານບໍລິການນອກເຄືອຂ່າຍໂດຍກົງ.
- ໂດຍທົ່ວໄປແລ້ວ ແຜນປະກັນສຸຂະພາບຂອງທ່ານຕ້ອງ:

- ຄຸ້ມຄອງການບໍລິການສຸກເສີນ ໂດຍບໍ່ຈໍາເປັນຕ້ອງໃຫ້ທ່ານຂໍຮັບການອະນຸມັດ ສໍາລັບການບໍລິການກ່ອນລ່ວງໜ້າ (ຫຼືເອີ້ນອີກຢ່າງໜຶ່ງວ່າ "ການອະນຸຍາດກ່ອນ ລ່ວງໜ້າ").
- ຄຸ້ມຄອງການບໍລິການສຸກເສີນຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ.
- ແຈ້ງຈໍານວນທີ່ທ່ານເປັນໜີ້ຜູ້ໃຫ້ບໍລິການ ຫຼື ສະຖານບໍລິການ (ສ່ວນແບ່ງ ຄ່າໃຊ້ຈ່າຍ) ທີ່ເປັນຄ່າໃຊ້ຈ່າຍທີ່ແຜນປະກັນຕ້ອງຈ່າຍໃຫ້ກັບຜູ້ໃຫ້ບໍລິການ ຫຼື ສະຖານບໍລິການໃນເຄືອຂ່າຍ ແລະ ສະແດງເງິນຈໍານວນນັ້ນໃນຄໍາອະທິບາຍ ຜົນປະໂຫຍດຂອງທ່ານ.
- ນັບເອົາຈໍານວນເງິນໃດໜຶ່ງທີ່ທ່ານຈ່າຍສໍາລັບການບໍລິການສຸກເສີນ ຫຼື ການບໍລິການນອກເຄືອຂ່າຍເຂົ້າໃສ່ວົງເງິນທີ່ເປັນຄ່າໃຊ້ຈ່າຍສ່ວນທໍາອິດ ແລະ ຈໍານວນເງິນທີ່ຕ້ອງຈ່າຍເອງໃນເຄືອຂ່າຍຂອງທ່ານ.

**ຖ້າທ່ານຄິດວ່າທ່ານໄດ້ຖືກຮຽກເກັບເງິນຢ່າງບໍ່ຖືກຕ້ອງ** ໃຫ້ຕິດຕໍ່ສູນສໍາລັບການບໍລິການ Medicare ແລະ Medicaid ທີ່ເບີ 1-800-985-3059 ຫຼື ພະແນກປະກັນໄພຂອງລັດເທັກຊັສ (Texas Department of Insurance) ທີ່ເບີ (800) 252-3439.
ເຂົ້າໄປທີ່ https://www.cms.gov/nosurprises/consumers ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິ ຂອງທ່ານພາຍໃຕ້ກົດໝາຍຂອງລັດຖະບານກາງ.

ເຂົ້າໄປທີ່ https://www.tdi.texas.gov/medical-billing/surprise-balance-billing.html ສໍາລັບ ຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານພາຍໃຕ້ກົດໝາຍຂອງລັດເທັກຊັສ.

**ທ່ານມີສິດໄດ້ຮັບ "ປະມານການຄ່າໃຊ້ຈ່າຍໂດຍສຸຈະລິດໃຈ" ເຊິ່ງອະທິບາຍວ່າຄ່າໃຊ້ຈ່າຍໃນການ ເບິ່ງແຍງສຸຂະພາບຂອງທ່ານຈະເປັນເທົ່າໃດ**

ພາຍໃຕ້ກົດໝາຍ ຜູ້ໃຫ້ບໍລິການເບິ່ງແຍງສຸຂະພາບຈໍາເປັນຕ້ອງໃຫ້ຂໍ້ມູນປະມານການລ່ວງໜ້າ ສໍາລັບລາຍການ ແລະ ການບໍລິການເບິ່ງແຍງສຸຂະພາບທີ່ໃຫ້ບໍລິການແກ່***ຄົນເຈັບຜູ້ທີ່ບໍ່ມີຄວາມ ຄຸ້ມຄອງການເບິ່ງແຍງສຸຂະພາບບາງປະເພດ ຫຼື ຜູ້ທີ່ບໍ່ໄດ້ໃຊ້ຄວາມຄຸ້ມຄອງໃນການເບິ່ງແຍງ ສຸຂະພາບບາງປະເພດ*** ກ່ອນທີ່ຈະໃຫ້ການຮັກສາຕາມລາຍການ ຫຼື ການບໍລິການເຫຼົ່ານັ້ນ.

- ທ່ານມີສິດໄດ້ຮັບປະມານການໂດຍສຸຈະລິດໃຈສໍາລັບຄ່າລາຍການ ແລະ ການບໍລິການ ເບິ່ງແຍງສຸຂະພາບໃດໜຶ່ງທີ່ຄາດໄວ້ທັງໝົດ ເມື່ອມີການຮ້ອງຂໍ ຫຼື ເມື່ອນັດໝາຍ ເພື່ອຮັບການຮັກສາຕາມລາຍການ ຫຼື ການບໍລິການດັ່ງກ່າວ. ສິ່ງນີ້ລວມເຖິງຄ່າໃຊ້ຈ່າຍ ທີ່ກ່ຽວຂ້ອງ ເຊັ່ນ: ຄ່າກວດທາງການແພດ, ຢາຕາມໃບສັ່ງແພດ, ອຸປະກອນ ແລະ ຄ່າທໍານຽມໂຮງໝໍ.
- ຖ້າທ່ານນັດໝາຍເພື່ອຮັບການຮັກສາຕາມລາຍການ ຫຼື ການບໍລິການເບິ່ງແຍງສຸຂະພາບ ກ່ອນລ່ວງໜ້າຢ່າງໜ້ອຍ 3 ມື້ທໍາການ, ກວດສອບໃຫ້ແນ່ໃຈວ່າຜູ້ໃຫ້ບໍລິການ ຫຼື ສະຖານ ບໍລິການເບິ່ງແຍງສຸຂະພາບຂອງທ່ານໃຫ້ປະມານການໂດຍສຸຈະລິດໃຈເປັນລາຍລັກ ອັກສອນແກ່ທ່ານພາຍໃນ 1 ມື້ທໍາການຫຼັງຈາກທີ່ເຮັດການນັດໝາຍແລ້ວ. ຖ້າທ່ານ ນັດໝາຍເພື່ອຮັບການຮັກສາຕາມລາຍການ ຫຼື ການບໍລິການເບິ່ງແຍງສຸຂະພາບກ່ອນ ລ່ວງໜ້າຢ່າງໜ້ອຍ 10 ມື້ທໍາການ, ກວດສອບໃຫ້ແນ່ໃຈວ່າຜູ້ໃຫ້ບໍລິການ ຫຼື ສະຖານ ບໍລິການເບິ່ງແຍງສຸຂະພາບຂອງທ່ານໃຫ້ປະມານການໂດຍສຸຈະລິດໃຈເປັນລາຍລັກ

ອັກສອນແກ່ທ່ານພາຍໃນ 3 ມື້ທຳການຫຼັງຈາກທີ່ເຮັດການນັດໝາຍແລ້ວ. ນອກຈາກນັ້ນ ທ່ານຍັງສາມາດຂໍໃຫ້ຜູ້ໃຫ້ບໍລິການ ຫຼື ສະຖານບໍລິການເບິ່ງແຍງສຸຂະພາບໃດໜຶ່ງເຮັດ ປະມານການໂດຍສຸຈະລິດໃຈ ກ່ອນທີ່ທ່ານຈະນັດໝາຍເພື່ອຮັບການຮັກສາຕາມລາຍການ ຫຼື ການບໍລິການ. ຖ້າທ່ານຮ້ອງຂໍ ໃຫ້ກວດສອບໃຫ້ແນ່ໃຈວ່າຜູ້ໃຫ້ບໍລິການ ຫຼື ສະຖານ ບໍລິການເບິ່ງແຍງສຸຂະພາບໃຫ້ປະມານການໂດຍສຸຈະລິດໃຈເປັນລາຍລັກອັກສອນແກ່ ທ່ານພາຍໃນ 3 ມື້ທຳການຫຼັງຈາກທີ່ທ່ານຮ້ອງຂໍ.

- ຖ້າທ່ານໄດ້ຮັບໃບບິນທີ່ຜູ້ໃຫ້ບໍລິການ ຫຼື ສະຖານບໍລິການໃດໜຶ່ງຮຽກເກັບຫຼາຍກວ່າ ປະມານການໂດຍສຸຈະລິດໃຈຂອງທ່ານຈາກຜູ້ໃຫ້ບໍລິການ ຫຼື ສະຖານບໍລິການນັ້ນ ຢ່າງໜ້ອຍ $400 ທ່ານສາມາດໂຕ້ແຍ່ງໃບບິນໄດ້.

ສຳລັບຄຳຖາມ ຫຼື ຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານຕໍ່ກັບປະມານການໂດຍສຸຈະລິດໃຈ ເຂົ້າໄປທີ່ www.cms.gov/nosurprises/consumers,
ສົ່ງອີເມວຫາ FederalPPDRQuestions@cms.hhs.gov ຫຼື ໂທເບີ 1-800-985-3059.